**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກົມໃຫຍ່ການເມືອງປ້ອງກັນຄວາມສະຫງົບ

ກົມສື່ມວນຊົນ

ເລກທີ 380 ........./ກລຊ

ນະຄອນຫຼວງວຽງຈັນ, ວັນທີ 28 ກໍລະກົດ ໒໐໒໖

## ໜັງສືແຈ້ງເງື່ອນໄຂສົມທຽບລາຄາຈັດຊື້ເຄື່ອງສົ່ງ
## ສະຖານີວິທະຍຸປ້ອງກັນຄວາມສະຫງົບ ແຂວງສະຫວັນນະເຂດ ແລະ ແຂວງຊຽງຂວາງ

ເຖິງ: ບໍລິສັດ ຫຼືຫົວໜ່ວຍທຸລະກິດຕ່າງໆ.

ໂດຍປະຕິບັດຕາມລະບຽບຫຼັກການຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2017.

ຫົວໜ້າກົມສື່ມວນຊົນ ປກສ ມີຄວາມຕ້ອງການຈັດຊື້ເຄື່ອງສົ່ງສະຖານີວິທະຍຸປ້ອງກັນຄວາມສະຫງົບ ແຂວງສະຫວັນນະເຂດ ແລະ ແຂວງຊຽງຂວາງ (ລາຍລະອຽດມີລາຍການຄັດຕິດມາພ້ອມນີ້) ຖ້າບໍລິສັດຫຼືຫົວໜ່ວຍທຸລະກິດຕ່າງໆມີຄວາມສົນໃຈເຂົ້າຮ່ວມສົມທຽບລາຄາໃຫ້ຕິດຕໍ່ສອບຖາມຂໍ້ມູນນຳກົມສື່ມວນຊົນ ປກສ, ກົມໃຫຍ່ການເມືອງປ້ອງກັນຄວາມສະຫງົບ ໃນວັນລັດຖະການ ໂທລະສັບ 020 5666 6755

**ມາດຖານເງື່ອນໄຂຜູ້ປະມູນຈັດຊື້ມີດັ່ງນີ້:**

1. ລາຍການຈັດຊື້: ເຄື່ອງສົ່ງສະຖານີວິທະຍຸພ້ອມອຸປະກອນປະກອບ ຕາມລາຍການທີ່ກຳນົດ.
2. ຄຸນລັກສະນະດ້ານວິຊາການ: ຜູ້ສະເໜີລາຄາຕ້ອງສະເໜີອຸປະກອນທີ່ມີຄຸນນະພາບ, ໄດ້ມາດຕະຖານ, ພ້ອມເອກະສານຢືນຢັນ ແລະ ລາຍລະອຽດທາງເຕັກນິກ.
3. ເອກະສານປະກອບການສະເໜີລາຄາ:
   - ໃບສະເໜີລາຄາ.
   - ສຳເນົາໃບອະນຸຍາດດຳເນີນທຸລະກິດ.
   - ໃບຂຶ້ນທະບຽນອາກອນ (ຖ້າມີ).
   - ເອກະສານລາຍລະອຽດທາງເຕັກນິກຂອງອຸປະກອນ.
4. ກຳນົດສົ່ງໃບສະເໜີລາຄາ: ບໍ່ໃຫ້ກາຍວັນທີ 03 ສິງຫາ 2026, ເວລາ 16:00 ໂມງ.
5. ສະຖານທີ່ສົ່ງ: ກົມສື່ມວນຊົນ ປກສ
6. ບໍລິສັດຕ່າງໆ ຕ້ອງຮັບປະກັນດ້ານຄຸນນະພາບ ແລະ ສາມາດຕອບສະໜອງໄດ້ຕາມແຜນການຈັດຊື້ຂອງກົມສື່ມວນຊົນ ປກສ.
7. ການຄິດໄລ່ ແລະ ການບໍລິການອື່ນໆ ໃນການດຳເນີນການຊື້-ຂາຍແມ່ນໃຫ້ຄິດໄລ່ລາຄາສົມເຫດສົມຜົນ, ບົນພື້ນຖານຄຸນນະພາບ, ໃນນັ້ນຝ່າຍບໍລິການຕ້ອງໄລ່ລວມຄ່າບໍລິການຕ່າງໆຢ່າງຄົບຖ້ວນ, ໃບແຈ້ງລາຄາຕ້ອງຊັດເຈນ

ບໍ່ເປື້ອນ ຫຼື ແປງຕົວເລກ, ໃຫ້ແຈ້ງລາຄາລວມຍອດ, ຖ້າບໍລິສັດໃດຫາກສະເໜີລາຄາຕໍ່າກວ່າໝູ່ ທາງຄະນະກໍາມະການກໍ່ຈະໄດ້ນໍາສະເໜີຂຶ້ນເທິງພິຈາລະນາ.

8. ກໍານົດສົ່ງມອບ-ຮັບເຄື່ອງ.

- ກໍານົດສົ່ງມອບ-ຮັບເຄື່ອງພາຍໃນ 60 ວັນ ນັບແຕ່ວັນເຊັນສັນຍາເປັນຕົ້ນໄປໃຫ້ສໍາເລັດ, ຕາມຈຸດຕິດຕັ້ງ ແລະ ມອບ-ຮັບ ສໍານັກງານຂອງຝ່າຍຊື້.

9. ການຊໍາລະສະສາງມູນຄ່າສິນຄ້າຕາມສັນຍາ.

- ການຊໍາລະສະສາງຫຼັງຈາກໄດ້ມອບ-ຮັບເຄື່ອງຖືກຕ້ອງ, ຄົບຖ້ວນຕາມຈໍານວນແລ້ວ ຈຶ່ງຊໍາລະໂດຍນໍາໃຊ້ງົບປະມານຂອງລັດ (ເງິນໂອນ).

10. ການຮັບປະກັນ.

- ບໍລິສັດຕ້ອງຮັບປະກັນຄຸນນະພາບເຄື່ອງສົ່ງສັນຍານວິທະຍຸໃຫ້ກັບຜູ້ຊື້.

11. ການສະເໜີຂໍ້ຕົກລົງຮັບຮອງເອົາຜູ້ຊະນະການສົມທຽບລາຄາການຈັດຊື້.

- ອີງໃສ່ມາດຖານເງື່ອນໄຂທີ່ໄດ້ກໍານົດໄວ້ໃນໃບແຈ້ງການສົມທຽບການຈັດຊື້.

- ຜູ້ສະເໜີລາຄາລວມຍອດຕໍ່າສຸດ ຈະໄດ້ຮັບພິຈາລະນາເປັນຜູ້ທໍາອິດ, ຖ້າອັນດັບ 01 ບໍ່ສາມາດຮັບຮອງໄດ້ກໍ່ຈະເອົາອັນດັບ 02 ແລະ ອັນດັບ 03 ໄປຄົ້ນຄວ້າສົມທຽບ.

ຫົວໜ້າກົມໃຫຍ່ການເມືອງປ້ອງກັນຄວາມສະຫງົບ ຫຼື ປະທານຄະນະກໍາມະການສົມທຽບລາຄາການຈັດຊື້ ເປັນຜູ້ຕົກລົງຮັບຮອງຜູ້ຊະນະການສົມທຽບລາຄາ.

12. ກໍານົດວັນ-ເວລາ ຂາຍຊອງ, ເປີດຊອງ ແລະ ສົມທຽບລາຄາ.

- ເອກະສານການປະມູນຈະເລີ່ມຂາຍແຕ່ວັນທີ **27-31/07/2026**

- ມື້ເປີດຊອງປະມູນການສົມທຽບລາຄາເວລາ 09:00 ໂມງ ຂອງວັນທີ **04/08/2026** ຢູ່ທີ່ຫ້ອງປະຊຸມຊັ້ນ II ຂອງກົມສື່ມວນຊົນ ປກສ.

- ລາຄາຊອງລະ 3.000.000 ກີບ (ສາມລ້ານກີບ) ສໍາລັບຄ່າຊອງຈະບໍ່ສົ່ງຄືນ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງ ບໍລິສັດຫົວໜ່ວຍທຸລະກິດຕ່າງໆ ເພື່ອຊາບ ແລະ ໃຫ້ຄວາມຮ່ວມມືດ້ວຍ.

**ຫົວໜ້າກົມສື່ມວນຊົນ**

ກົມໃຫຍ່ການເມືອງປ້ອງກັນຄວາມສະຫງົບ
ກົມສື່ມວນຊົນ ປກສ

**ພອນພິລຸນ ບັນຍາສີລີ**
**Phonephiloun PANYASILI**

**ຜູ້ປະສານງານ**
ພັຕ ນາງ ລິນຄໍາ ໄຊເຮືອງຄໍາ
ເບີໂທ: 020 5666 6755